GCI

# ບົດຮຽນທີ 2
# ການສັນລະເສີນ & ການນະມັດສະການ

## ຈຸດປະສົງຂອງບົດຮຽນ

ພາຍຫລັງທີ່ຈົບບົດຮຽນນີ້ແລ້ວ, ນັກຮຽນຈະສາມາດ:

- ໃຫ້ນິຍາມ ຄວາມໝາຍຂອງການນະມັດສະການຕາມຂໍ້ພະຄໍາທີ່ສໍາຄັນ
- ອະທິບາຍຄວາມສໍາຄັນຂອງການນະມັດສະການ
- ລາຍການຄວາມແຕກຕ່າງລະຫວ່າງການສັນລະເສີນ ກັບ ການນະມັດສະການ
- ນໍາໃຊ້ທ່າທີຕ່າງໆໃນການສັນລະເສີນ ແລະ ການນະມັດສະການ
- ນໍາໃຊ້ຄໍາແນະນໍາໃນການນໍານະມັດສະການ

## ໂຄງຮ່າງບົດຮຽນ

I. ສາເຫດຕ່າງໆຂອງການສັນລະເສີນ ແລະ ການນະມັດສະການ
   ກ. ພະເຈົ້າຊົງສະແຫວງຫາຜູ້ທີ່ນະມັດສະການພະອົງ
   ຂ. ພະເຈົ້າຊົງສ້າງພວກເຮົາມາເພື່ອໃຫ້ນະມັດສະການພະອົງ
   ຄ. ພະຄໍາຂອງພະເຈົ້າໄດ້ບອກສັ່ງພວກເຮົາໃຫ້ສັນລະເສີນພະເຈົ້າ
   ງ. ພະເຈົ້າຊົງສົມຄວນທີ່ເຮົາຈະສັນລະເສີນ
   ຈ. ການນະມັດສະການນໍາມາຊຶ່ງການກັບໃຈໃໝ່ ແລະ ການຖືກຊົງຊໍາລະໃຫ້ສະອາດ
   ສ. ການນະມັດສະການເຮັດໃຫ້ເຮົາເປັນອັນໜຶ່ງອັນດຽວກັນ ໃນຂະນະທີ່ເຮົາເຂົ້າເຖິງທີ່ປະທັບຂອງພະເຈົ້າ ແລະ ຕຽມຈິດຕຽມໃຈຂອງເຮົາເພື່ອຮັບເອົາພະຄໍາຂອງພະອົງ.

II. ສິ່ງທີ່ຕ້ອງລົງທືນໃນການສັນລະເສີນພະເຈົ້າ

III. ຄວາມແຕກຕ່າງລະຫວ່າງ ການສັນລະເສີນ ແລະ ການນະມັດສະການ
   ກ. ການສັນລະເສີນ
   ຂ. ການນະມັດສະການ
   ຄ. ພວກເຮົາສາມາດເວົ້າໄດ້ວ່າ ໃນການສັນລະເສີນ –ແລະ ການນະມັດສະການຂອງເຮົານັ້ນ ມີອົງປະກອບເບື້ອງຕົ້ນ **ສາມ** ຢ່າງດ້ວຍກັນ.

IV. ພວກເຮົາຈະສັນລະເສີນ ແລະ ນະມັດສະການພະເຈົ້າໄດ້ຢ່າງໃດ?
   ກ. ໃນລັກສະນະຂອງການອອກສຽງ
   ຂ. ໃນລັກສະນະຂອງການເບິ່ງເຫັນ
   ຄ. ທ່າທາງຕ່າງໆຂອງຮ່າງກາຍເຮົາ

V. ຜົນຂອງການສັນລະເສີນ ແລະ ການນະມັດສະການ
   ກ. ໄດ້ສໍາພັດເຖິງການຊົງປະທັບຢູ່ຂອງພະເຈົ້າ
   ຂ. ລິດອໍານາດຂອງພະເຈົ້າສໍາແດງອອກ
   ຄ. ເປັນອາວຸດຝ່າຍວິນຍານເພື່ອໄຊຊະນະ

GCI

VI. ວິທີການນຳນະມັດສະການ ແລະ ການສັນລະເສີນ

ກ. ສິ່ງຈຳເປັນສຳລັບຜູ້ນຳ

ຂ. ການຈັດຕຽມຂອງຜູ້ນຳ

ຄ. ຂໍ້ແນະນຳທົ່ວໄປ

ງ. ການໃຊ້ສັນຍານມືກັບນັກດົນຕຣີ

GCI

# I. ຄຳແນະນຳ

ເອຊາຢາ 43:18–21: ພະເຈົ້າຢາກຈະເຮັດໃຫ້ເກີດ**ສິ່ງໃໝ່ໆ**ໃນການສັນລະເສີນ ແລະ ການນະມັດສະການຂອງພວກເຮົາ. ໃຫ້ພວກເຮົາເປີດຈິດເປີດໃຈ ແລະ ເປີດຈິດວິນຍານ.

ເພງສັນລະເສີນ 16:11: "ຢູ່ຊ້ອງໜ້າພະອົງຂ້າພະອົງ**ຊົມຊື່ນຍິນດີ**ຫລາຍ ..."

ບາງຄັ້ງ ພວກເຮົາມັກສ້າງກຳແພງແຫ່ງ**ປະເພນີ**ຂຶ້ນມາຕັນຕົວເອງ (ຄື ພວກເຮົາມັກເຮັດຕາມແບບເກົ່າມາຕະຫລອດ); ຄະນະນິກາຍ ຫລື ຄຣິສຕະຈັກທີ່**ອອດອິ່ງ**; ຢ້ານກົວສິ່ງໃໝ່ໆ, ບໍ່ໄວ້ວາງໃຈກັນແລະອື່ນໆ.

# II. ສາເຫດຕ່າງໆຂອງການສັນລະເສີນ ແລະ ການນະມັດສະການ

## ກ. ພະເຈົ້າຊົງສະແຫວງຫາຜູ້ທີ່ຈະນະມັດສະການພະອົງ ໂຢຮັນ 4:23–24.

- ພວກເຮົາຕ້ອງນະມັດສະການດ້ວຍ**ຈິດວິນຍານ** ບໍ່ແມ່ນຕາມປະເພນີ, ດ້ວຍສະຕິປັນຍາ - ແຕ່ນະມັດສະການຈາກໃຈແທ້ໆ.

  ເວລາທີ່ເຮົານະມັດສະການພະເຈົ້ານັ້ນ, ພະອົງບໍ່ໄດ້ເບິ່ງທີ່ຄຳເວົ້າ ແຕ່ຊົງເບິ່ງ**ທ່າທີ**ຫົວໃຈຂອງເຮົາ.

  ເອຊາຢາ 29:13 – ພະຜູ້ເປັນເຈົ້າໄດ້ກ່າວວ່າ, "ຄວາມເຊື່ອຖືຂອງພວກເຂົາບໍ່ມີຫຍັງ ແຕ່ເປັນກົດເກນ ແລະ ຮີດຄອງຂອງມະນຸດ ເຊິ່ງພວກເຂົາໄດ້ທ່ອງຂຶ້ນໃຈເທົ່ານັ້ນ." ບໍ່ແມ່ນຈິດວິນຍານແທ້ໆ.

  ການນະມັດສະການ ຄື ການຕອບສະໜອງຝ່າຍ**ຈິດວິນຍານຂ**ອງທ່ານ ຕໍ່**ພະວິນຍານ**ຂອງພະເຈົ້າ. ການນະມັດສະການຕ້ອງມາຈາກຄວາມຈິງ ແລະຈິງໃຈແທ້. ການນະມັດສະການບໍ່ແມ່ນເລື່ອງຂອງຄຳເວົ້າທີ່ສອຍງາມເທົ່ານັ້ນ, ທ່ານຈະຕ້ອງເປັນເໝືອນຄຳເວົ້ານັ້ນດ້ວຍ.

  1 ຊາມູເອນ 16:7: "ມະນຸດເບິ່ງພາຍນອກ ແຕ່ເຮົາເບິ່ງພາຍໃນຈິດໃຈ"

- ດ້ວຍ**ຄວາມຈິງ** – "ການນະມັດສະການດ້ວຍຄວາມຈິງ" ແມ່ນການນະມັດສະການພະເຈົ້າ ຢ່າງທີ່ພະອົງໄດ້ຊົງປາກົດໃຫ້ເຫັນໃນພະຄຳພີແທ້ໆ.

  ເມື່ອເຮົາດື່ມນ້ຳແຫ່ງຊີວິດ ນ້ຳນັ້ນຈະກາຍເປັນນ້ຳພຸໃນເຮົາ ຊຶ່ງສາມາດເຮັດໃຫ້ມີຊີວິດທີ່ສົມບໍລິບູນໄດ້.

## ຂ. ພະເຈົ້າຊົງສ້າງພວກເຮົາມາເພື່ອໃຫ້ນະມັດສະການພະອົງ ເອຊາຢາ 43:21.

ເພງສັນລະເສີນ 145:10–11 ຈະກ່າວເຖິງພະລາຊະອຳນາດອັນກຽງໄກ, ບອກເຖິງອຳນາດອັນຍິ່ງໃຫຍ່ຂອງພະເຈົ້າ. ພວກເຮົາສັນລະເສີນພະເຈົ້າຕໍ່ພະອົງເອງ ສັນລະເສີນພະອົງຕໍ່ຄົນອື່ນໆ. ການສັນລະເສີນປ່ຽນແປງເຮົາ.

ຫົວໃຈແຫ່ງການນະມັດສະການນັ້ນຄື **ການຖວາຍຕົວ** (ໂຣມ 12:1). ການຖວາຍຕົວເປັນການຕອບສະໜອງຕໍ່ຄວາມຮັກອັນອັດສະຈັນຂອງພະເຈົ້າ ແລະ ພະເມດຕາຂອງພະອົງ.
ການນະມັດສະການທີ່ແທ້ຈິງ - ເປັນທີ່ຊອບພະໄທພະເຈົ້າ - ຊົງພໍພະໄທຫລາຍ ເມື່ອທ່ານມອບຕົວທ່ານເອງໄວ້ກັບພະເຈົ້າ. ການຖວາຍຕົວທ່ານເອງກັບພະເຈົ້ານັ້ນແຫລະ ແມ່ນການນະມັດສະການ. ການນະມັດສະການ ແມ່ນ**ອາດຊົງໃນການດຳເນີນຊີວິດ**ດ້ວຍ.

**ຄ. ພະຄຳຂອງພະເຈົ້າໄດ້ບອກສັ່ງພວກເຮົາໃຫ້ສັນລະເສີນພະເຈົ້າ:**

| | |
|---|---|
| ເພງສັນລະເສີນ 34:1 | "ຂ້າພະອົງຈະຂອບຄຸນພະຜູ້ເປັນເຈົ້າຢູ່ຕະຫລອດເວລາ ຂ້າພະອົງຈະບໍ່ເຊົາສັນລະເສີນພະອົງຈັກເທື່ອ." |
| ເພງສັນລະເສີນ 103:1 | "ຈົ່ງສັນລະເສີນພະຜູ້ເປັນເຈົ້າ ຈິດໃຈຂອງຂ້ອຍເອີຍ! ຈິດວິນຍານຂອງຂ້ອຍເອີຍ ຈົ່ງຍົກຍໍພະນາມບໍລິສຸດ!" |
| ເພງສັນລະເສີນ 150:1, 6 | "ຂໍໃຫ້ທຸກສິ່ງທີ່ມີຊີວິດຢູ່ນັ້ນ ຈົ່ງຍົກຍໍພະເຈົ້າ! ຈົ່ງສັນລະເສີນພະ ຜູ້ເປັນເຈົ້າ" ເພງສັນລະເສີນ 149, 148, 147, 146 |
| ເອຊາຢາ 61:3 | "ມີຄວາມຊົມຊື່ນຍິນດີແທນທີ່ມີຄວາມໂສກເສົ້າ." |

ພະເຈົ້າບໍ່ໄດ້ຂໍໃຫ້ພວກເຮົາສັນລະເສີນພະອົງ, ແຕ່ພະອົງຊົງບັນຊາຢ່າງນັ້ນ. ຍ້ອນຫຍັງ?

ເພາະມັນຈະນຳເຮົາໃຫ້ມີຄວາມສຳພັນທີ່ໃກ້ຊິດກັບພະອົງຫລາຍຂຶ້ນ.

**ງ. ພະເຈົ້າຊົງສົມຄວນທີ່ເຮົາຈະສັນລະເສີນ ພະນິມິດ 4:11, 5:9–13.**

ເວລາທີ່ເຮົາສັນລະເສີນພະເຈົ້າ ເຮົາກໍປະກາດເຖິງການເປັນກະສັດ ແລະ ການຊົງຄອບຄອງໃນຊີວິດຂອງເຮົາ.

ພວກເຮົາມາເພື່ອຖວາຍແດ່ພະເຈົ້າ, ບໍ່ແມ່ນມາຮັບຈາກພະອົງ. ພວກເຮົາກຳລັງບອກພະເຈົ້າເຖິງຄວາມຍິ່ງໃຫຍ່ຂອງພະອົງ.

**ຈ. ການນະມັດສະການນຳມາຊຶ່ງການກັບໃຈໃໝ່ແລະການຖືກຊຳລະໃຫ້ສະອາດ ເອຊາຢາ 6:19.**

ການນະມັດສະການນຳມາຊຶ່ງການສຳນຶກຕໍ່ບາບ ແລະ ການຖືກຊົງຊຳລະໃຫ້ບໍລິສຸດ. ຫລັງຈາກນັ້ນ ເຮົາຈຶ່ງຈະສາມາດໄດ້ຍິນສຽງເອີ້ນຂອງອົງພະຜູ້ເປັນເຈົ້າ ແລະ ສາມາດຕອບພະອົງໄດ້ວ່າ, "ຂ້ານ້ອຍຢູ່ທີ່ນີ້ແລ້ວ, ຂໍສົ່ງຂ້ານ້ອຍໄປ."

**ສ. ການນະມັດສະການເຮັດໃຫ້ເຮົາເປັນອັນໜຶ່ງອັນດຽວກັນ ໃນຂະນະທີ່ເຮົາເຂົ້າເຖິງທີ່ປະທັບຂອງ ພະເຈົ້າ ແລະ ຕຽມຈິດຕຽມໃຈຂອງເຮົາເພື່ອຮັບເອົາພະຄຳຂອງພະອົງ.**

GCI

# III ສິ່ງທີ່ຕ້ອງໄດ້ລົງທຶນໃນການສັນລະເສີນພະເຈົ້າ

"ພວກເຮົາໄດ້ນຳເຄື່ອງຖວາຍແຫ່ງການສັນລະເສີນມາດັ່ງນີ້":

1. **ກຳລັງ :** ບາງຄົນຮູ້ສຶກເມື່ອຍຫລາຍ ແລະ ບໍ່ຮູ້ສຶກຢາກສັນລະເສີນໃນຕອນນັ້ນ.

2. **ການຈັດຕຽມ :** "ໃຜມີສິດຂຶ້ນໄປຍັງ... ?" "ແມ່ນຜູ້ທີ່ທຳ ແລະ ຄິດຢ່າງບໍລິສຸດ." (ເພງສັນລະເສີນ 24:34)

3. **ເວລາ :** ພວກເຮົາອາດຈະຫຍຸ້ງວຽກຫລາຍຈົນບໍ່ມີເວລາໃຫ້ກັບອົງພະຜູ້ເປັນເຈົ້າ ຕົວຢ່າງເຊັ່ນ: ມາລີອາ ແລະ ມາທາ (ລູກາ 10:4042)

1 ຂ່າວຄາວ 21:24: ແຕ່ກະສັດຕອບວ່າ, *"ບໍ່ ເຮົາຈະຈ່າຍໃຫ້ເຈົ້າເຕັມລາຄາ ເຮົາຈະບໍ່ຖວາຍບູຊາສິ່ງທີ່ເຮົາໄດ້ລ້າຈາກເຈົ້າ."*

# IV. ຄວາມແຕກຕ່າງລະຫວ່າງການສັນລະເສີນ ກັບ ການນະມັດສະການ

## ກ. ການສັນລະເສີນ

ເປັນການສະແດງອອກເຊິ່ງການຍົກຍໍ, ການຕົບມືໃຫ້, ຍົກຍ້ອງບາງຄົນເປັນໃຫຍ່

**ການສັນລະເສີນ** ເປັນສິ່ງທີ່ເຮົາສະແດງອອກໂດຍຕົງຕໍ່ພະເຈົ້າ ຫລື ສຳແດງຕໍ່ຄົນອື່ນໆໃນເລື່ອງພະເຈົ້າ.
**ການສັນລະເສີນ** ເປັນການຈົດຈໍ່ຢູ່ກັບພະລັກສະນະຂອງພະເຈົ້າ ແລະ ສິ່ງທີ່ພະອົງໄດ້ກະທຳເພື່ອພວກເຮົາ.

### 1. ຢູດາ ແລະ ການສັນລະເສີນ

| | | |
|---|---|---|
| ປະຖົມມະການ 29:35 | - | ພະເຈົ້າໄດ້ຕັດສິນໃຈທີ່ຈະສະແດງພະກະລຸນາອັນພິເສດຕໍ່ຢູດາ, ເພາະໂດຍທາງເຜົ່ານີ້ທີ່ພະເມຊີອາຈະຊົງປະສູດມາ. "*ເທື່ອນີ້ຂ້ອຍຈະສັນລະເສີນພະເຈົ້າ, ສະນັ້ນນາງຈຶ່ງໃສ່ຊື່ໃຫ້ເດັກນ້ອຍນັ້ນວ່າ ຢູດາ.*" ຢູດາ = ສັນລະເສີນ. |
| ພວກຜູ້ປົກຄອງ 1:12 | - | ເຜົ່າທີ່ຕໍ່ສູ້ກັບພວກຄານາອານເປັນເຜົ່າທຳອິດແມ່ນເຜົ່າຢູດາ. |
| ເພງສັນລະເສີນ 114:2 | - | ເຜົ່າຢູດາ ກາຍເປັນຝູງຊົນຂອງພະເຈົ້າ. |
| ເພງສັນລະເສີນ 76:12 | - | ພະເຈົ້າຊົງເປັນທີ່ຮູ້ຈັກກັນໃນຢູດາ. |

GCI

**2. ພວກເຮົາສາມາດສັນລະເສີນພະເຈົ້າຈາກພະທໍາເພງສັນລະເສີນໄດ້ດັ່ງນີ້:**

| | | |
|---|---|---|
| ເພງສັນລະເສີນ 46:1 | - | ຊົງເປັນທີ່ກໍາບັງ ແລະກໍາລັງຂອງຂ້າພະອົງ |
| ເພງສັນລະເສີນ 18:2 | - | ຊົງເປັນສີລາ, ເປັນປ້ອມອັນແໜ້ນໜາ, ເປັນຜູ້ປົກປ້ອງ, ເປັນຜູ້ຊ່ອຍໃຫ້ພົ້ນໄພ, ເປັນຄວາມພົ້ນ, ແລະ ເປັນທີ່ລີ້ໄພຂອງຂ້າພະອົງ. |
| ເພງສັນລະເສີນ 23:1 | - | ຊົງເປັນຜູ້ລ້ຽງຂ້າພະອົງ |
| ເພງສັນລະເສີນ 145:89 | - | ຊົງພະກະລຸນາ, ຊົງເມດຕາປານີ, ຊົງໂກດຮ້າຍຊ້າ, ຊົງເຕັມໄປດ້ວຍຄວາມຮັກ, ແລະ ຊົງເຮັດດີຕໍ່ມະນຸດທຸກຄົນ. |
| ເພງສັນລະເສີນ 95:15 | - | ຊົງເປັນພະເຈົ້າອົງຍິ່ງໃຫຍ່, ຊົງເປັນກະສັດອົງຍິ່ງໃຫຍ່, ຊົງເປັນພະຜູ້ສ້າງ. |
| ເພງສັນລະເສີນ 96:46 | - | ຊົງຍິ່ງໃຫຍ່, ຊົງສົມຄວນແກ່ການສັນລະເສີນ, ຊົງເປັນທີ່ຢໍາເກງ, ຊົງເປັນຜູ້ສ້າງຟ້າສະຫວັນ. |

ໃນຂໍ້ພະຄໍາເຫລົ່ານີ້ ພວກເຮົາບໍ່ໄດ້ກໍາລັງບອກພະເຈົ້າເຖິງສິ່ງທີ່ຕົນເອງຕ້ອງການ, ແຕ່ກໍາລັງຍົກຍໍພະອົງຢູ່. ພວກເຮົາຕ້ອງບອກຄົນອື່ນວ່າ ເຮົາຮັກເຂົາເຈົ້າ, ບໍ່ໃຫ້ເວົ້າວ່າ, "ເຂົາເຈົ້າຮູ້ແລ້ວ". ພວກເຂົາຕ້ອງການໄດ້ ຍິນ ຄໍານັ້ນ.

## ຂ. ການນະມັດສະການ

ມັດທາຍ 4:10 "ຈົ່ງຂາບໄຫວ້ພະອົງຜູ້ເປັນພະເຈົ້າຂອງເຈົ້າ ແລະປະຕິບັດພະອົງແຕ່ຜູ້ດຽວ."

**ການນະມັດສະການ:** "ການຍົກສູງ ຫລື ການຖືວ່າຊົງຄຸນຄ່າ, ການຖືວ່າຊົງສົມຄວນ."

**ການນະມັດສະການ** ຮຽກຮ້ອງໃຫ້ມີຄວາມສໍາພັນກັນກ່ອນ ເພາະມັນເປັນທັງສອງທາງ.

**ການນະມັດສະການ** ເປັນຄວາມໃກ້ຊິດສ່ວນຕົວລະຫວ່າງມະນຸດກັບພະເຈົ້າ - ພະເຈົ້າຊົງສະແຫວງຫາຜູ້ທີ່ນະມັດສະການພະອົງ.

**ການນະມັດສະການ** ແມ່ນການມອບຕົວເຮົາເອງຕໍ່ພະຜູ້ເປັນເຈົ້າ, ເຊັ່ນ: ຜູ້ຍິງກັບນໍ້າມັນຫອມ. ນາງບໍ່ໄດ້ອາຍທີ່ຈະຖອກເທຈິດໃຈຂອງນາງເອງຕໍ່ອົງພະຜູ້ເປັນເຈົ້າດ້ວຍຄວາມຮັກທີ່ຍອມຈໍານົນແທ້ໆ (ມັດທາຍ 26:7)

ພວກເຮົາສາມາດນະມັດສະການພະເຈົ້າໃນຍາມທີ່ມືດມົນໄດ້, ຊຶ່ງເປັນການປ່າວປະກາດວ່າ ພະອົງຊົງເປັນອົງພະຜູ້ເປັນເຈົ້າໃນທຸກໆສະຖານະການ ທັງເປັນການສະແດງຄວາມຮັກຂອງເຮົາທີ່ມີຕໍ່ພະອົງດ້ວຍ.

**ອັບຣາຮາມ** ຕອນທີ່ຈະຖວາຍອີຊາກ, ເປັນການນະມັດສະການ (ປະຖົມມະການ 22:5, ເຊັ່ນດຽວກັບ ໂຣມ 12:1)

**ໂຢບ** ຄອບຄົວໄດ້ຕາຍ (ໂຢບ 1:20)

**ດາວິດ** ລູກຊາຍທີ່ເກີດຈາກນາງບັດເຊບາຕາຍ (2 ຊາມູເອນ 12:20)

GCI

ຄ. ພວກເຮົາສາມາດເວົ້າໄດ້ວ່າ ໃນການສັນລະເສີນ ແລະ ການນະມັດສະການຂອງເຮົານັ້ນ ມີອົງປະກອບເບື້ອງຕົ້ນ **ສາມ** ຢ່າງດ້ວຍກັນ.

**ການໂມທະນາພະຄຸນ** ຕໍ່ຄວາມດີຂອງພະເຈົ້າ

**ການສັນລະເສີນ** ຕໍ່ຄວາມຍິ່ງໃຫຍ່ຂອງພະເຈົ້າ

**ການນະມັດສະການ** ຕໍ່ຄວາມບໍລິສຸດຂອງພະອົງ

ໃຫ້**ປະກອບ**ເນື້ອໃນເຫລົ່ານີ້ ເພື່ອນຳໃນການນະມັດສະການ. (ເພງສັນລະເສີນ 100:4)

# V. ພວກເຮົາຈະສັນລະເສີນ ແລະ ນະມັດສະການພະເຈົ້າໄດ້ຢ່າງໃດ?

## ກ. ໃນລັກສະນະຂອງການອອກສຽງ

**ເພງສັນລະເສີນ 66:8** “*ຈົ່ງສັນລະເສີນພະເຈົ້າເຖີດບັນດາຊົນຊາດເອີຍ!*
ຈົ່ງໃຫ້ທຸກຄົນ**ໄດ້ຍິນສຽງ**ສັນລະເສີນນັ້ນ.”

1. **ການຕົບມື** – ເພງສັນລະເສີນ 47:1.

   ເປັນການສະແດງອອກເຖິງຄວາມຊົມຊື່ນຍິນດີ, ຕົບມືຖວາຍແກ່ອົງພະຜູ້ເປັນເຈົ້າ.

2. **ການຮ້ອງດ້ວຍສຽງດັງ** ເພງສັນລະເສີນ 47:1

   ອິສະຣາເອນເປັນທີ່ຮູ້ຈັກກັນດີໃນຄານາອານ ເລື່ອງການຮົບດ້ວຍສຽງຮ້ອງຂອງພວກເຂົາ. ເມື່ອພວກເຂົາຮ້ອງອອກດ້ວຍສຽງດັງ ເຫລົ່າສັດຕູກໍຈະສັ່ນໄປດ້ວຍຄວາມຢ້ານກົວ. ສຽງແຫ່ງການສັນລະເສີນເປັນຈຸດເລີ່ມແຫ່ງໄຊຊະນະທີ່ເມືອງເຢຣິໂກ ທັງເລື່ອງຂອງກິເດໂອນດ້ວຍ.

3. **ການເວົ້າ** ເພງສັນລະເສີນ 71:24ກ – “ຕະຫລອດມື້ຂ້າພະອົງຈະເວົ້າເຖິງແຕ່ຄວາມຊອບທຳຂອງພະອົງ.”

4. **ການຮ້ອງເພງ**

   ບົດເພງ**ໃໝ່** ເພງສັນລະເສີນ 98:1; 149:1; ເອຊາຢາ 42:10a; ພະນິມິດ 14:3

   ບົດເພງແຕ່ກ່ອນທີ່ທ່ານ ຫລື ຄົນອື່ນກໍບໍ່ຮູ້.

   ບົດເພງແຫ່ງການສັນລະເສີນພະເຈົ້າທີ່ເກີດຂຶ້ນເອງ (ທີ່ເຮົາບໍ່ແຕ່ງມາກ່ອນ).

   ລອງຮ້ອງບົດ**ເພງສັນລະເສີນ 100** ຫລື **98.**

   ບົດເພງສັນລະເສີນຂອງມາຣີອາ ລູກາ **1:46-49**

   ຮ້ອງເພງຈາກຂໍ້ພະຄຳພີ ຫລື ຮ້ອງເພງທີ່ຖືກຂຽນຂຶ້ນ

GCI

## ຂ. ໃນລັກສະນະຂອງການເບິ່ງເຫັນ

1. **ການຍົກມື** – ເພງສັນລະເສີນ 141:2; 63:4; 134:2.

ການມອບທຸກຢ່າງຕໍ່ພະເຈົ້າ

**"ໂດຍການຍົກມືຂອງຂ້າພະອົງ"**

2. **ການຟ້ອນລຳ** ເພງສັນລະເສີນ 149:3; 150:4; 30:11.

ນາງມີລີອາມດີອົກດີໃຈ(ຟ້ອນລຳ)ໃນການຊົງໂຜດຊ່ວຍ ອົບພະຍົບ 15:20-21

ລູກຊາຍທີ່ຫລົງເສຍ - ຊົມຊື່ນຍິນດີໃນຄວາມຟື້ນ

ຄົນງ່ອຍລຸກຂຶ້ນເຕັ້ນ ກິດຈະການ 3:8

ກະສັດດາວິດຊົມຊື່ນຍິນດີ(ຟ້ອນລຳ)ໃນການຊົງສະຖິດຢູ່ຂອງອົງພະຜູ້ເປັນເຈົ້າ, ດ້ວຍສຸດກຳລັງຂອງເພິ່ນ. 2 ຊາມູເອນ 6:14-16, 23

ບໍ່ຄວນໃຫ້ການຟ້ອນລຳມີຢູ່ໃນທຸກໆການນະມັດສະການ, ແຕ່ຖ້າຫາກມີ ກໍໃຫ້ເປັນພັນທະກິດຮັບໃຊ້ແກ່ອົງພະຜູ້ເປັນເຈົ້າ. ການຟ້ອນລຳນຳມາຊຶ່ງການປົດປ່ອຍຈິດວິນຍານຂອງເຮົາ. ຢ່າລືມວ່າ ເມຍຂອງດາວິດໄດ້ຕຳນິເພິ່ນທີ່ໄປຟ້ອນລຳຕໍ່ພະພັກອົງພະຜູ້ເປັນເຈົ້າ ອັນເປັນເຫດໃຫ້ນາງບໍ່ສາມາດມີລູກໄດ້. ພວກເຮົາເອງກໍບໍ່ຕ້ອງການໃຫ້ຈິດວິນຍານເປັນໝັນ!

**"ເມື່ອຈິດວິນຍານຂອງອົງພະຜູ້ເປັນເຈົ້າ ..."**

## ຄ. ທ່າທາງຕ່າງໆຂອງຮ່າງກາຍເຮົາ

1. **ການຢືນ:** ເປັນການເຄົາລົບ, ຕື່ນຕົວ. "ຢືນຂຶ້ນ .. ຕໍ່ພະເຢຊູ"

ຫໍເຕັນສັກສິດຈະບໍ່ມີຕັ່ງ. ປະໂລຫິດຕ້ອງຢືນຮັບໃຊ້ຕໍ່ອົງພະຜູ້ເປັນເຈົ້າ.

| | |
|---|---|
| **ເນເຫມີຢາ 8:56** | ຢືນຂຶ້ນ, ຍົກມືຂຶ້ນ, ຮ້ອງອອກວ່າ, "ອາແມນ", ກົ້ມຂາບລົງ ເພື່ອຕອບສະໜອງຕໍ່ພະຄຳ. |

2. **ການຄຸເຂົ່າ**: ຄວາມເຄົາລົບຢຳເກງ – ເພງສັນລະເສີນ 95:67 "ພະອົງຊົງເປັນອົງພະຜູ້ເປັນເຈົ້າ"

3. **ການເງີຍຫົວຂຶ້ນ:** ເປັນການບູຊາ

**ເພງສັນລະເສີນ 123:1** - *"ຂ້າພະອົງແຫງນໜ້າແນມຫາພະອົງ ..."*

**ເພງສັນລະເສີນ 121:1** - *ຂ້ອຍຫລຽວຂຶ້ນໄປສູ່ເທິງພູທັງຫລາຍ ..."*

4. **ການສະງົບງຽບ :** ເປັນການລໍຄອຍພະເຈົ້າ. ຕົວຢ່າງເອລີຢາ, ພະເຈົ້າບໍ່ໄດ້ຢູ່ໃນລົມພະຍຸ, ແຜ່ນດິນໄຫວ, ກອງໄຟ ແຕ່ຢູ່ໃນສຽງນ້ອຍໆ. ຈົ່ງໃຫ້ໂອກາດທີ່ພະເຈົ້າຈະໄດ້ກ່າວແດ່ ຢ່າເວົ້າຢູ່ແຕ່ຝ່າຍດຽວ!

GCI

# VI. ຜົນຂອງການສັນລະເສີນ ແລະ ການນະມັດສະການ

## ກ. ໄດ້ສຳພັດເຖິງການຊົງປະທັບຢູ່ຂອງພະເຈົ້າ - ເພງສັນລະເສີນ 22:3 (ບັນລັງຂອງພະອົງຢູ່ໃນຄຳຍົກຍໍສັນລະເສີນຂອງຊາວອິສະຣາເອນ)

- **ພະເຈົ້າຊົງສະຖິດຢູ່ທຸກຫົນແຫ່ງ.**

ບ່ອນໃດກໍຕາມທີ່ມີສອງຫາສາມຄົນຮ່ວມກັນໃນພະນາມຂອງພະອົງ ພະອົງກໍສະຖິດ ຢູ່ທີ່ນັ້ນດ້ວຍ. ພະເຈົ້າຊົງສະຖິດຢູ່ຖ່າມກາງຄຳສັນລະເສີນແຫ່ງໄພ່ພົນຂອງພະອົງ.

ແລະ ຍັງມີການຊົງສຳແດງພິເສດເຖິງການຊົງປະທັບຢູ່ຂອງພະອົງ:

ການຍ່າງອ້ອມກຳແພງເມືອງເຢຣິໂກຂອງໂຢຊວຍ.

ໃນພະວິຫານໂຊໂລໂມນ.

ວັນເພັນເຕຄໍສະເຕ.

ພະເຈົ້າບໍ່ພຽງແຕ່ຢາກມາຢ້ຽມຢາມໄພ່ພົນຂອງພະອົງເທົ່ານັ້ນ, ພະອົງຍັງຕ້ອງການຈະສະຖິດຢູ່ຖ່າມກາງພວກເຮົາດ້ວຍ.

- **ຫໍເຕັນຂອງໂມເຊ:**

**ເດີ່ນທາງນອກ**

- ຂັນທອງສຳລິດ ການຊຳລະລ້າງ
- ແທ່ນເຜົາເຄື່ອງບູຊາ ຖວາຍເຮົາເອງເປັນເຄື່ອງບູຊາທີ່ມີຊີວິດ

**ຫ້ອງບໍລິສຸດ**

- ຄັນປະທີທັງເຈັດ ພະເຢຊູຊົງເປັນຄວາມສະຫວ່າງ, ເປັນຄວາມຈິງ, ພະວິນຍານບໍລິສຸດ
- ໂຕະຖວາຍເຂົ້າຈີ່ ພິທີສິນມະຫາສະໜິດ(ຄວາມຊິດໃກ້
- ແທ່ນຖວາຍເຄື່ອງຫອມ ການຖວາຍຄຳສັນລະເສີນເປັນເໝືອນກັບກິ່ນຫອມຈາກເຄື່ອງຫອມນັ້ນ.

**ຫ້ອງບໍລິສຸດທີ່ສຸດ**

ຫີບພັນທະສັນຍາ ທີ່ສະຖິດຢູ່ຂອງພະເຈົ້າ

**ການທີ່ຈະເຂົ້າໄປເຖິງທີ່ປະທັບຂອງພະເຈົ້ານັ້ນ ສາມາດແບ່ງເປັນຂັ້ນຕອນຕ່າງໆໄດ້ຄື:**

| | |
|---|---|
| ເດີ່ນທາງນອກ | ການໂມທະນາຂອບພະຄຸນ (ເພງສັນລະເສີນ 100:4) |
| ຫ້ອງບໍລິສຸດ | ການສັນລະເສີນ |
| ຫ້ອງບໍລິສຸດທີ່ສຸດ | ການນະມັດສະການ |

GCI

## ຂ. ລິດອຳນາດຂອງພະເຈົ້າສຳແດງອອກ

1. ພະເຈົ້າຊົງ**ກ່າວ:** 2 ກະສັດ 3:15–16

   ເອລີຊາໄດ້ໄປເອີ້ນນັກດີດພິນມາຫລິ້ນພິນ ແລ້ວຖ້ອຍຄຳແຫ່ງການທຳນວາຍກໍໄຫລອອກມາ. ພະເຈົ້າຊົງກ່າວຜ່ານທາງຂອງປະທານແຫ່ງພະວິນຍານບໍລິສຸດ.

2. **ປົດປ່ອຍ**ລິດເດດ : ກິດຈະການ 16:25–26

   ການສັນລະເສີນເຮັດໃຫ້ໂສ້ຫລຸດອອກ ແລະ ປະຕູກໍໄຂອອກດ້ວຍ.

   ພິນອື່ນໆ: ນຳມາຊຶ່ງການປົດປ່ອຍ ແລະ ຄວາມພົ້ນ. ກິດຈະການ 1:29–34

3. **ໄຊຊະນະ**ເໜືອສັດຕູ: 2 ຂ່າວຄາວ 20:22

   ພວກນັກຮ້ອງໄດ້ໂມທະນາຂອບພະຄຸນອົງພະຜູ້ເປັນເຈົ້າ. ພວກເຂົາບໍ່ໄດ້ປັກໃຈທີ່ການສູ້ຮົບ, ຫລື ພວກສັດຕູ, ແຕ່ພວກເຂົາປັກໄປທີ່ພະເຈົ້າຜູ້ຊົງເປັນຄຳຕອບ.

## ຄ. ເປັນອາວຸດຝ່າຍວິນຍານເພື່ອໄຊຊະນະ

ເວລາທີ່ພວກປະຊາຊົນເລີ່ມຕົ້ນສັນລະເສີນພະເຈົ້າ, ພະເຈົ້າກໍໄດ້ສົ່ງການໂຈມຕີຕໍ່ສູ້ມາເຖິງພວກສັດຕູ (2 ຂ່າວຄາວ 20:22)

ຕອນທີ່ໂປໂລ ແລະ ຊີລາຢູ່ໃນຄຸກນັ້ນ ພວກເພິ່ນບໍ່ໄດ້ພະຍາຍາມແກ້ໂສ້ທີ່ມັດຕົນເອງ. ພວກເພິ່ນມີແຕ່ສັນລະເສີນພະເຈົ້າເພາະຄວາມດີຂອງພະອົງ.

ຄຳສັນລະເສີນເປັນອາວຸດໃນມືຂອງຄຣິດສະຕຽນ. ເວລາທີ່ດາວິດຫລິ້ນພິນ ກໍຈະເຮັດໃຫ້ວິນຍານຊົ່ວໃນກະສັດໂຊນສະງົບລົງ. (1 ຊາມູເອນ 16:23)

ເພງສັນລະເສີນ 149:69: ຄຳສັນລະເສີນໃນປາກ, ກໍເປັນດາບສອງຄົມຢູ່ໃນມື.

GCI

# VII. ວິທີການນຳນະມັດສະການ ແລະ ການສັນລະເສີນ

## ກ. ສິ່ງຈຳເປັນສຳລັບຜູ້ນຳ.

ຜູ້ນຳຈະຕ້ອງເອົາໃຈໃສ່ຈົດຈໍ່ ແລະ ນຳພາທິດທາງຂອງການນະມັດສະການ.

ລູກແກະຕ້ອງການຕິດຕາມນຳພາ ຫລື ບໍ່ຊັ້ນອາດຫລົງທາງໄປແບບບໍ່ຮູ້ເປົ້າໝາຍ. ການນະມັດສະການມີການຈົດຈໍ່ແລ້ວ ທີ່ນັ້ນກໍຈະມີຄວາມເປັນນຶ່ງດຽວຢ່າງເຕັມທີ່.

## ຂ. ການຈັດຕຽມຂອງຜູ້ນຳ.

1. ອະທິຖານ – ວາງແຜນ – ປະຕິບັດ.

2. ຈົ່ງຕຽມຈິດວິນຍານຂອງທ່ານເອງຕໍ່ພະຜູ້ເປັນເຈົ້າ.

3. ວາງແຜນການນະມັດສະການ ກໍຄືກັບການທີ່ທ່ານຈະສຶກສາພະຄຳພີ.

4. ສະແຫວງຫາພະເຈົ້າຕາມຫົວຂໍ້ ຫລື ຄວາມຄິດຕ່າງໆ:

   ກ) ນະມັດສະການ : **ຂ້າພະອົງນະມັດສະການພະອົງ / ຂ້າພະອົງຮັກພະອົງ ພະຜູ້ເປັນເຈົ້າຂ້າ**

   ຂ) ໄຊຊະນະ : **ໃນພະນາມພະເຢຊູ / ຂໍພະເຈົ້າຟື້ນຟູ.**

   ຄ) ການຄອງລາດ : **ກະສັດເຢຊູຊົງປົກຄອງ / ອົງສູງສຸດ / ກະສັດເໜືອສິ່ງທັງປວງ.**

5. ຈົ່ງຫລີກລ້ຽງ ການຕໍ່ເພງ ທີ່ມີຈັງຫວະບໍ່ຄືກັນ:

   **ຂໍຊົງໂຜດໃຫ້ຟື້ນ** (ຊື່ເພງ) ... / **ຂໍຖວາຍກຽດແດ່ພະເຈົ້າ** (ຊື່ເພງ).

6. ພະຍາຍາມບໍ່ທຳລາຍເນື້ອຫາຂອງເພງ ເຊັ່ນ ກຳລັງຮ້ອງເພງທີ່ມີເນື້ອຫານະມັດສະການຢູ່ດີໆ ແລ້ວປ່ຽນໄປເປັນເພງທີ່ເວົ້າເລື່ອງຄວາມຊົມຊື່ນຍິນດີທັນທີ.

   **ຂ້າພະອົງຮັກພະອົງ ພະຜູ້ເປັນເຈົ້າ / ຂ້າພະອົງນະມັດສະການພະອົງ / ພວກເຮົານຳເຄື່ອງຖວາຍມາ**

7. ໃຫ້ເລືອກເພງທີ່ເຂົ້າກັບເນື້ອຫາ – ເນື້ອຫາທີ່ເປັນການສັນລະເສີນ, ແລະ ເປັນການນະມັດສະການ.

8. ໃຫ້ຄິດເຖິງພະຄຳຂອງພະເຈົ້າ, ໃຫ້ໄຕ່ຕອງເບິ່ງເນື້ອຫາຂອງບົດເພງ.

9. ຈົ່ງລະມັດລະວັງ ຢ່າໃຫ້ເປັນ “ການແບ່ງປັນ” ໃນຂະນະກຳລັງຮ້ອງເພງຢູ່.

10. ໃຫ້ຊ້ອມທຸກໆເພງທີ່ທ່ານໄດ້ເລືອກໄວ້ກ່ອນ.

11. ຕ້ອງຮູ້ຈັກການຕໍ່ເພງທີ່ແຕກຕ່າງກັນ.

GCI

## ຄ. ຂໍ້ແນະນຳທົ່ວໄປ.

1. ຈົ່ງຍອມໃຫ້ພະວິນຍານບໍລິສຸດນຳພາ. ໃຫ້ຕິດຕາມພະວິນຍານ ບໍ່ແມ່ນຕິດຕາມຫລັກການ.

2. ຈົ່ງຍອມຕໍ່ "ອາລົມ" ທີ່ພະວິນຍານບໍລິສຸດຊົງນຳ:

| | | | |
|---|---|---|---|
| ກ) | ຄວາມຊົມຊື່ນຍິນດີ, ການຂອບພະຄຸນ, ການຟ້ອນລຳ | : | **"ຂ້າຈະເຂົ້າມາ ສັນເສີນ ..."** |
| ຂ) | ການເສີມສ້າງຄວາມເຊື່ອ | : | **"ບໍ່ແມ່ນລິດ ບໍ່ແມ່ນແຮງ ແຕ່ ..."** |
| ຄ) | ການຕໍ່ສູ້ ສົງຄາມ / ໄຊຊະນະ | : | **"ໃນພະນາມພະເຢຊູ ..."** |
| ງ) | ການບູຊາ / ເຄົາລົບຢຳເກງ | : | **"ມາ, ໃຫ້ພວກເຮົາບູຊາພະອົງ"** |
| ຈ) | ການໂມທະນາພະຄຸນ | : | **"ພະຄຸນພະເຈົ້າ"** |
| ສ) | ການມອບຖວາຍ | : | **"ຊົງຄອບຄອງເໜືອຂ້າ"**<br>**"ຂ້າມອບຖວາຍທຸກຢ່າງແກ່ພະເຢຊູ"** |

ຮູ້ຈັກວ່າ ຕອນໃດ ຈຶ່ງຄວນຈະມີການນະມັດສະການແບບອິດສະຫລະ (ແບບບໍ່ມີການວາງແຜນໄວ້ກ່ອນ). ເມື່ອກ້ອນເມກເຄື່ອນໄປທີ່ໃດ ພວກອິສະຣາເອນກໍເຄື່ອນຍ້າຍໄປທີ່ນັ້ນ! (ອົບພະຍົບ 40:35-38)

ໃຫ້ໂອກາດທີ່ຂອງປະທານຝ່າຍວິນຍານຈະຖືກນຳມາໃຊ້. ຈົ່ງເສີມສ້າງຄົນອື່ນດ້ວຍຖ້ອຍຄຳຂອງພະເຈົ້າທີ່ຊົງກ່າວໂດຍຜ່ານທາງຂອງປະທານຝ່າຍວິນຍານ.

## ງ. ການໃຫ້ສັນຍານມື ກັບນັກດົນຕຣີ

1. ຮ້ອງຄືນ ໝົດ ເພງ – ໃຫ້ໝູນນິ້ວຊີ້.
2. ຮ້ອງຄືນ ຕອນທ້າຍ ເພງ – ຍົກນິ້ວກ້ອຍຂຶ້ນ.
3. ຮ້ອງຊ້ຳ ແຖວທ້າຍ ເພງ – ໝູນນິ້ວກ້ອຍ.
4. ຮ້ອງຄືນ ຂໍ້ຊ້ຳ ເທົ່ານັ້ນ – ຍົກນິ້ວຊີ້ຂຶ້ນ.
5. ນະມັດສະການແບບອິດສະຫລະ – ວາງມືລົງ ແລ້ວສັ່ນນິ້ວ.
6. ປ່ຽນໄປເພງຕໍ່ໄປ – ໂບກມືໄປທາງຂ້າງ.
7. ຍົກຄີຂຶ້ນສູງອີກ – ຍົກນິ້ວໂປ້ຂຶ້ນ.